### ຂ້າພະເຈົ້າຕ້ອງໄດ້ຂໍເອົາການຊ່ວຍເຫລືອອາຫານຂອງຂ້າພະເຈົ້າໂດຍຜ່ານໂຄງການ *WASHCAP* ບໍ່ ?

ພາຍໃຕ້ສະພາບການບາງຢ່າງ,ທ່ານຈະເລືອກທີ່ຈະໄດ້ຮັບໂຄງການ Basic Food ແທນທີ່ວ່າຈະແມ່ນ WASHCAP. ກະຣຸນາຕິດຕໍ່ຫາໂຄງການ WASHCAP ຖ້າຫາກວ່າທ່ານມີຄຳຖາມເພີ້ມເຕີມກ່ຽວກັບການຖອນຕົວອອກ.

### ທ່ານຕ້ອງໄດ້ຮູ້ຈັກຫຍັງແດ່ກ່ຽວກັບການໂອນການຊ່ວຍເຫລືອທາງເອເລກໂຕຣນິກ?

- ຖ້າຫາກວ່າທ່ານມີບັດ Washington EBT ຢູ່ແລ້ວ, ທ່ານສາມາດໃຊ້ບັດໄດ້ ແລະ ເລກບັດປະຈຳຕົວ ປັດຈຸບັນຂອງທ່ານ.
- ຖ້າຫາກວ່າທ່ານບໍ່ມີບັດ EBT ທ່ານສາມາດຮ້ອງຂໍໃຫ້ພວກເຮົາສົ່ງບັດໄປໃຫ້ທັງໄປສະນີ. EBT ບັດຈະມາຮອດພາຍໃນຫ້າເຖິງເຈັດວັນເຮັດການ.
- ທ່ານຈະໄດ້ຮັບປຶ້ມນ້ອຍແນະນຳມານຳບັດ EBT ຂອງທ່ານ.



### ທ່ານສາມາດເອົາບັດ *EBT* ຂອງທ່ານໃຫ້ຄົນໃດຄົນນຶ່ງເພື່ອຈະອອກຕະລາດໃຫ້ທ່ານໄດ້ບໍ່?

- ຄົນໃດຄົນນຶ່ງຜູ້ທີ່ທ່ານໄວ້ໃຈໄດ້ຈະໃຊ້ບັດ EBT ແລະເລກ PIN ຂອງທ່ານໄດ້.ເມື່ອເວລາບັດຂອງທ່ານຖືກໃຊ້ນຳເລກ PIN ຂອງທ່ານ,ທ່ານອະນຸຍາດການໃຊ້ອັນນັ້ນ.
- ທ່ານຈະເລືອກເອົາຜູ້ຖືບັດ EBT ສຳລອງເພື່ອຈະອອກຕະລາດໃຫ້ທ່ານ.ຜູ້ຖືບັດສຳລອງຈະໄດ້ບັດ EBT ຕ່າງຫາກແລະເລກ PIN. ຖ້າຫາກວ່າທ່ານສົນໃຈໃນການຕື່ມຜູ້ຖືບັດ EBT ສຳລອງໃສ່, ກະຣຸນາຕິດຕໍ່ຫາ WASHCAP ເພື່ອຣາຍຣະອຽດເພີ້ມເຕີມ.

### ສິດທິ ແລະ ຄວາມຮັບຜິດຊອບຂອງທ່ານແມ່ນຫຍັງແດ່?

- ທ່ານມີສິດທີ່ຈະຮ້ອງຂໍເອົາການຟັງເຣື່ອງຖ້າຫາກວ່າທ່ານບໍ່ເຫັນພ້ອມນຳຄຳຕັດສິນທີ່ພວກເຮົາເຮັດລົງໄປກ່ຽວກັບການຊ່ວຍເຫລືອອາຫານຂອງທ່ານ.
- ທ່ານໄດ້ຖືກບົ່ງໃຫ້ລາຍງານການປ່ຽນແປງທຸກໆຢ່າງຢູ່ໃນສະພາບການຂອງທ່ານໄປຫາພະນັກງານຂອງ Social Security Administration ຂອງທ່ານ.
- ທ່ານຍັງຈະໂທຫາ WASHCAP ໄດ້ອີກຄືກັນໄດ້ທີ່ 1-877-380-5784 ເພື່ອຈະເບິ່ງວ່າການປ່ຽນແປງເຫລົ່ານີ້ຈະສະທ້ອນເຖິງການຊ່ວຍເຫລືອອາຫານຂອງທ່ານ ຫລື ບໍ່.

ສະຖາບັນແຫ່ງນີ້ແມ່ນບ່ອນບໍຣິການທີ່ໃຫ້ໂອກາດເທົ່າທຽມກັນ.

Washington State
Department of Social & Health Services
Transforming lives

DSHS 22-480 LA (Rev. 8/24)

# WASHCAP

## ໂຄງການຄຳຮ້ອງຂໍ ລວມເຂົ້າໃສ່ກັນ ຂອງຣັດວໍຊິງຕັນ



## ການຊ່ວຍເຫລືອ **WASHCAP** ແມ່ນຫຍັງ?

- ການສຳພາດສຳລັບເງິນຊ່ວຍເຫລືອ SSI ຂອງທ່ານອາດຈະເປັນການສຳພາດສຳລັບການຊ່ວຍເຫລືອອາຫານຂອງທ່ານ.
- ພວກເຮົາຈະບໍ່ຂໍຮ້ອງໃຫ້ທ່ານຂຽນປະກອບໃບຟອມຫລາຍໃບ.
- ທ່ານຈະມີຣະຍະເວລາອະນຸມັດທີ່ດົນນານກວ່າ.
- ທ່ານຈະບໍ່ໄດ້ໄປຫາຫ້ອງການ Department of Social and Health Services ຈັກເທື່ອ.
- ການຊ່ວຍເຫລືອອາຫານຂອງທ່ານຈະເຂົ້າໄປຫາບັນຊີການໂອນ ການຊ່ວຍເຫລືອທາງເອເລັກໂຕຣນິກ. ພວກເຮົາຈະສົ່ງ ບັດໄປໃຫ້ທ່ານເພື່ອຈະໃຊ້ເມື່ອເວລາທ່ານຊື້ເອົາອາຫານ. ບັດ EBT ຈະທຳງານຄ້າຍຄືກັນກັບບັດທະນາຄານຫລືບັດເດບິດ.

## ຂ້າພະເຈົ້າສາມາດໄດ້ຮັບການຊ່ວຍເຫລືອອາຫານ **WASHCAP** ໄດ້ແນວໃດ?

ທ່ານຈະໄດ້ຮັບໂຄງການ WASHCAP ເມື່ອເວລາທ່ານໄດ້ຖືກອະນຸມັດໃຫ້ໄດ້ຮັບການຊ່ວຍເຫລືອອາຫານ ແລະ ທ່ານ. ສອດຄ່ອງນຳກົດເກັນທຸກໆຢ່າງຢູ່ຂ້າງລຸ່ມນີ້.

- ໄດ້ຮັບເງິນ SSI.
- ມີອາຍຸຢ່າງຫນ້ອຍ 18 ປີ.
- ບໍ່ໄດ້ແຕ່ງງານ-ຫລື-ແຕ່ງງານແຕ່ວ່າບໍ່ໄດ້ອາສັຍຢູ່ນຳຜົວເມັຽຂອງທ່ານ.
- ບໍ່ໄດ້ອາສັຍຢູ່ນຳລູກຂອງທ່ານອາຍຸຕ່ຳກວ່າ 22 ປີ.
- ບໍ່ໄດ້ເຮັດວຽກຢູ່.
- ອາສັຍຢູ່ຄົນດຽວ ຫລື ຊື້ເອົາ ແລະ ເຮັດກິນອາຫານຂອງທ່ານ ແຍກຈາກຄົນອື່ນຜູ້ທີ່ອາສັຍຢູ່ນຳທ່ານ.

## ທ່ານຈະລາຍງານການປ່ຽນແປງໄດ້ຢ່າງໃດ?

- ລາຍງານການປ່ຽນແປງໄປຫາຫ້ອງການ Social Security Administration ໄດ້ທີ່ເລກ 1-800-772-1213.

## ການປ່ຽນແປງແນວໃດແດ່ທີ່ທ່ານຕ້ອງການເພື່ອຈະລາຍງານ ໄປຫາ **Social Security Administration?**

- ຣາຍໄດ້
- ຊັບສິນ
- ສະພາບການແຕ່ງງານ
- ສະພາບການເປັນຢູ່

## ແມ່ນຫຍັງຈະເກີດຂຶ້ນເມື່ອເວລາພວກເຮົາກວດເບິ່ງເອກສານຂອງທ່ານຄືນ?

- ເມື່ອເວລາ SSA ກວດເບິ່ງເອກສານຂອງທ່ານຄືນ, ການຊ່ວຍເຫລືອອາຫານ WASHCAP ຂອງທ່ານຍັງຈະຖືກອະນຸມັດຕໍ່ອອກໄປໄດ້ອີກຄືກັນໃນຣະຫວ່າງການກວດເບິ່ງຄືນຂອງ SSA.
- ຖ້າຫາກວ່າ SSA ບໍ່ກວດເບິ່ງເອກສານຂອງທ່ານຄືນ, ພວກເຮົາຈະສົ່ງໃບຟອມໄປໃຫ້ທ່ານເພື່ອຈະຂຽນປະກອບແລະສົ່ງກັບຄືນມາກ່ອນທີ່ການຊ່ວຍເຫລືອຂອງທ່ານຈະຢຸດ.



## ໂຄງການອາຫານ **WASHCAP** ແມ່ນຫຍັງ?

WASHCAP ແມ່ນໂຄງການຄຳຮ້ອງຂໍລວມເຂົ້າໃສ່ກັນຂອງຣັດວໍຊິງຕັນ.
ມັນເປັນໂຄງການອາຫານພິເສດສຳລັບບຸກຄົນຜູ້ທີ່ໄດ້ຮັບເງິນ SSI.

*ກະຣຸນາໂທຫາ WASHCAP*
*ໄດ້ທີ່ເລກ **1-877-380-5784***
*ຖ້າຫາກວ່າທ່ານມີຄຳຖາມແນວໃດ.*